رئاسة الشؤون الدينية
بالمسجد الحرام والمسجد النبوي

فَضَائِلُ وَآدَابُ المَسْجِدِ النَّبَوِيِّ وَأَحْكَامُ زِيَارَةِ قَبْرِ النَّبِيِّ ﷺ وَقَبْرَي صَاحِبَيْهِ رَضِيَ اللَّهُ عَنْهُمَا

مقدوني

македонски

# ຄວາມປະເສີດ ແລະ ມາລະຍາດທີ່ຄວນມີ ຕໍ່ມັສຍິດອັນ-ນະບະວີ, ແລະ ຂໍ້ບັນຍັດຂອງ ການຢ້ຽມຢາມຫລຸມຝັງສົບຂອງທ່ານນະບີ ຈ່ອລລັລລ່ຮ ອະໄລຮິ ອະສັລລ່ຳ ແລະ ຫລຸມ ຝັງສົບຂອງສະຫາຍທັ້ງສອງຂອງທ່ານ ຣ໋ດິຍັລລ່ຮ ອັນຮຸມ່າ

ຄະນະກຳມະການວິຊາການ ຂອງສຳນັກງານ
ກິດຈະການສາສະໜາ ປະຈຳມັດສະຍິດອັລຫະຣອມ
ແລະ ມັດສະຍິດອັນນະບະວີ

فَضَائِلُ وَآدَابُ المَسْجِدِ النَّبَوِيِّ

وَأَحْكَامُ زِيَارَةِ قَبْرِ النَّبِيِّ ﷺ

وَقَبْرَي صَاحِبَيْهِ رَضِيَ اللهُ عَنْهُمَا

# ຄວາມປະເສີດ ແລະ ມາລະຍາດທີ່ຄວນມີຕໍ່ມັສຍິດອັນ-ນະບະວີ, ແລະ ຂໍ້ບັນຍັດຂອງການຢ້ຽມຢາມຫລຸມຝັງສົບຂອງ ທ່ານນະບີ ﷺ ແລະ ຫລຸມຝັງສົບຂອງສະຫາຍທັ້ງສອງຂອງທ່ານ ﷺ ອັນຮຸ່ມາ


اللَّجْنَةُ العِلْمِيَّةُ

بِرِئَاسَةِ الشُّؤُونِ الدِّينِيَّةِ بِالمَسْجِدِ الحَرَامِ وَالمَسْجِدِ النَّبَوِيِّ

ຄະນະກຳມະການວິຊາການ ຂອງສຳນັກງານກິດຈະການສາສະໜາ ປະຈຳມັດສະຍິດອັລຫะຣອມ ແລະ ມັດສະຍິດອັນ-ນะบะวี

بِسْمِ اللهِ الرَّحْمَنِ الرَّحِيمِ

# ຄວາມປະເສີດ ແລະ ມາລະຍາດທີ່ຄວນມີຕໍ່ມັສຍິດອັນ-ນະບະວີ, ແລະ ຂໍ້ບັນຍັດຂອງການຢ້ຽມຢາມຫລຸມຝັງສົບຂອງທ່ານ ນະບີ ﷺ ແລະ ຫລຸມຝັງສົບຂອງສະຫາຍທັ້ງສອງຂອງທ່ານ ﷺ ອັນຮຸ່ມາ

## ບົດນຳ

ມວນການສັນລະເສີນທັ້ງປວງເປັນສິດຂອງອັລລ໋ອ ຜູ້ອະພິບານແຫ່ງສາກົນລະໂລກ, ແລະ ຂໍການອວຍພອນຄວາມສັນຕິສຸກ ຈົ່ງມີແດ່ຜູ້ທີ່ຖືກສົ່ງມາເພື່ອເປັນຄວາມເມດຕາແກ່ຊາວໂລກທັ້ງຫຼາຍ, ແລະ ຕະຫຼອດຈົນບັນດາວົງວານຕະກູນ ແລະ ມິດສະຫາຍຂອງທ່ານ ﷺ ແລະ ບັນດາຜູ້ທີ່ດຳເນີນຕາມລຸນນະຫ໌ຂອງທ່ານ ﷺ ແລະ ໄດ້ຮັບການຊີ້ແນະຕາມແນວທາງຂອງທ່ານຈົນຮອດວັນແຫ່ງການຕອບແທນ, ຕໍ່ໄປນີ້:

ນີ້ຄືຂໍ້ຄວາມສະບັບຫຍໍ້, ທີ່ປະກອບດ້ວຍຄວາມປະເສີດທີ່ສຳຄັນທີ່ສຸດຂອງມັສຍິດນະບະວີ, ແລະ ມາລະຍາດໃນການຢ້ຽມຢາມມັນ, ແລະ ມາລະຍາດໃນການຢ້ຽມຢາມຫຼຸມຝັງສົບຂອງນະບີ, ແລະ ຫຼຸມຝັງສົບຂອງສອງສະຫາຍຂອງທ່ານ ﷺ, ພວກເຮົາໄດ້ຮອບຮວມມັນໄວ້ໃຫ້ແກ່ບັນດາຜູ້ມາຢ້ຽມຢາມມັສຍິດນະບະວີ, ເພື່ອໃຫ້ພວກເຂົາໄດ້ມີຄວາມຮູ້ ແລະ ຄວາມເຂົ້າໃຈໃນຜົນລະບຸນຂອງມັສຍິດຂອງນະບີແຫ່ງປະຊາຊາດຂອງທ່ານນະ

ບີ ﷺ, ແລະ ມາລະຍາດໃນການຍ້ຽມຢາມມັນ ແລະ ການລະມາ
ດໃນນັ້ນ, ໂດຍຫວັງຈາກພຣະຜູ້ຊົງກະລຸນາປານີ, ພຣະຜູ້ຊົງໂປ
ດປານ ວ່າພຣະອົງຈະໃຫ້ເກີດປະໂຫຍດດ້ວຍກັບມັນ, ແລະ ໃຫ້
ມັນເປັນສິ່ງທີ່ດີງາມ ແລະ ບໍລິສຸດໃຈເພື່ອພຣະອົງ. ແທ້ຈິງພຣ
ະອົງຄືຜູ້ທີ່ດີເລີດທີ່ສຸດທີ່ຖືກຂອບຂໍ ແລະ ເປັນຜູ້ຊົງກະລຸນາທີ່
ສຸດທີ່ຖືກຄາດຫວັງ.

ຄະນະກຳມະການວິຊາການ

## ໜຶ່ງ: ຄວາມປະເສີດຂອງມັສຍິດອັນນະບະວີ (ມັສຍິດຂອງທ່ານນະບີ)

ອັລລໍຮ໌ ໄດ້ກ່າວວ່າ :

﴿وَرَبُّكَ يَخۡلُقُ مَا يَشَآءُ وَيَخۡتَارُۗ مَا كَانَ لَهُمُ ٱلۡخِيَرَةُۚ سُبۡحَٰنَ ٱللَّهِ وَتَعَٰلَىٰ عَمَّا يُشۡرِكُونَ ٦٨﴾

(ແລະ ພຣະເຈົ້າຂອງເຈົ້າ ຊົງສ້າງສິ່ງທີ່ພຣະອົງຊົງປະສົງ ແ
ລະ ຊົງເລືອກ, ພວກເຂົາບໍ່ມີສິດເລືອກ ມະຫາບໍລິສຸດແດ່ອັລລໍ
ຮ໌ ແລະ ຊົງສູງສົ່ງຈາກສິ່ງທີ່ພວກເຂົາຕັ້ງພາຄີ) [ອັລ-ກໍສໍສ:
68] ແລະ ອັລລໍຮ໌ ໄດ້ຊົງເລືອກສະຖານທີ່ນີ້ ເພື່ອໃຫ້ເປັນມັສຍິ
ດສຳລັບທ່ານນະບີຂອງພຣະອົງ ຊັລລັລລໍຮຸ ອະໄລຮິ ອະສັລລ່ຳ
ແລະ ໄດ້ຊົງໃຫ້ຄວາມພິເສດແກ່ມັນດ້ວຍຄວາມປະເສີດຫຼາຍ
ປະການ, ເຊິ່ງໃນນັ້ນມີ:

ແທ້ຈິງ ມັນແມ່ນຫນຶ່ງໃນສາມມັສຍິດທີ່ອະນຸຍາດໃຫ້ເດີນ
ທາງໄປສູ່:

ລາຍງານຈາກທ່ານອາບູ ຮຸຣອຍເຣາະຫ໌ ຣ໌ດີຢັລລໍອັນຮຸ, ໂດ
ຍອ້າງເຖິງທ່ານນະບີ ﷺ ກ່າວວ່າ:

«لَا تُشَدُّ الرِّحَالُ إِلَّا إِلَى ثَلَاثَةِ مَسَاجِدَ: مَسْجِدِي هَذَا، وَمَسْجِدِ الحَرَامِ، وَمَسْجِدِ الأَقْصَى».

«ບໍ່ໃຫ້ມີການຈັດກຽມເພື່ອການເດີນທາງ ນອກຈາກໄປຍັງມັສຍິດ 3 ແຫ່ງຄື: ມັສຍິດຂອງຂ້ອຍແຫ່ງນີ້, ມັສຍິດອັລຫะຮອມ, ແລະ ມັສຍິດອັລອັກซอ»[1].

ແທ້ຈິງ ການລะຫมาดในนั้น ปะเสิดกอ่าหนึ่งพันการนละหมาดในสะถานที่อื่น นอกจากมัสยิดอัลหะรอม:

ลายงานจากท่านอาบู ฮุรอยเราะห์ ร.ด. ล่ำอ่า: ท่านนะบี ﷺ ก่าวอ่า:

«صَلَاةٌ فِي مَسْجِدِي هَذَا خَيْرٌ مِنْ أَلْفِ صَلَاةٍ فِيمَا سِوَاهُ، إِلَّا المَسْجِدَ الحَرَامَ».

«การนละหมาดในมัสยิดของข้อยแห่งนี้ ปะเสิดกอ่า 1000 การนละหมาดในมัสยิดอื่นๆ, นอกจาก มัสยิดอัลหะรอม»[2].

ແທ້ຈິງ มันแม่นมัสยิดที่ถืกสางตั้งขึ้นบ่นคอามย่ำเกางตั้งแต่อันท่ำอิด:

ลายงานจาก อะบี สะอีด อัล-คุดรี ร.ด. ล่ำอ่า: ข้อยได้เข้าไปหาท่านร่อสูล ลุลล่ห์ ﷺ ในบ้านของพันละยาบางคนของท่าน, แล้วข้อยได้ก่าอ่า โอ้! ท่านสาสะนะฮูดของอัลล่ห์ มัสยิดใดในสองแห่ง ที่ถืกสางตั้งขึ้นบ่นคอามย่ำเกาง (ตักอา)? เผิ่นเล่ำอ่า: ดั่งนั้น ท่านนะบีจึ่

[1] บันทึกโดย อัลบุกค่ารี, เลกที่ (1189) แลละ มุสลิม, เลกที่ (1397), แลละสำนอนแม่นของเผิ่น.

[2] บันทึกโดย อัลบุกค่ารี, เลกที่ (1190) แลละ มุสลิม, เลกที่ (1395), แลละสำนอนแม่นของอัลบุกค่ารี.

ໆໄດ້ກ່າວເອົາຫີນນ້ອຍໜຶ່ງກ່ຳມື ແລ້ວໂຍນມັນລົງພື້ນດິນ, ຈາກ ນັ້ນທ່ານກໍກ່າວວ່າ:

«هُوَ مَسْجِدُكُمْ هَذَا» لِمَسْجِدِ المَدِينَةِ.

«ມັນແມ່ນມັສຍິດຂອງພວກເຈົ້າແຫ່ງນີ້» ໝາຍເຖິງມັສ ຍິດມະດີນະຫ໌[1].

ແທ້ຈິງ ຜົນຕອບແທນຂອງຜູ້ສຶກສາສະແວງຫາຄວາມຮູ້ໃ ນນັ້ນ, ຄືກັບຜົນຕອບແທນຂອງຜູ້ຕໍ່ສູ້ໃນຫົນທາງຂອງອັລລ ໍ ຫ໌:

ລາຍງານຈາກທ່ານອາບູ ຮຸຣອຍເຣາະຫ໌ ຣໍດິຢັ ລ ລ ໍ ອັນຮຸ, ເ ລ ໍ ່ າວ່າຂ້ອຍໄດ້ຍິນທ່ານຣໍສູ ລ ລ ໍ ຫ໌ ﷺ ໄດ້ກ່າວວ່າ:

«مَنْ جَاءَ مَسْجِدِي هَذَا، لَمْ يَأْتِهِ إِلَّا لِخَيْرٍ يَتَعَلَّمُهُ أَوْ يُعَلِّمُهُ، فَهُوَ بِمَنْزِلَةِ المُجَاهِدِ فِي سَبِيلِ اللهِ، وَمَنْ جَاءَ لِغَيْرِ ذَلِكَ، فَهُوَ بِمَنْزِلَةِ الرَّجُلِ يَنْظُرُ إِلَى مَتَاعِ غَيْرِهِ».

«ຜູ້ໃດທີ່ມາຍັງມັສຍິດຂອງຂ້ອຍແຫ່ງນີ້ ໂດຍບໍ່ໄດ້ມາເພື່ອ ສິ່ງໃດນອກຈາກເພື່ອຄວາມດີງາມທີ່ລາວຈະຮຽນຮູ້ ຫຼື ສອນມັ ນ, ລາວກໍ່ຈະຢູ່ໃນຖານະທຽບເທົ່າກັບຜູ້ທີ່ຕໍ່ສູ້ໃນຫົນທາງຂອງ ອັລລ ໍ ຫ໌, ແລະ ຜູ້ໃດທີ່ມາເພື່ອສິ່ງອື່ນນອກເໜືອຈາກນັ້ນ, ລາວ ກໍ່ຈະຢູ່ໃນຖານະທຽບເທົ່າກັບຊາຍທີ່ໄດ້ແຕ່ເບິ່ງຊັບສິນຂອງຄົ ນອື່ນ»[2].

ແທ້ຈິງ ໃນນັ້ນມີ ເຮົາເດາະຫ໌ ອັນຊົ ງ ງ ດ:

ລາຍງານຈາກທ່ານອາບູ ຮຸຣອຍເຣາະຫ໌ ຣໍດິຢັ ລ ລ ໍ ອັນຮຸ, ຈາ ກທ່ານນະບີ ﷺ ກ່າວວ່າ:

---

[1] ບັນທຶກໂດຍທ່ານມຸສລິມ ເລກທີ (1398).

[2] ບັນທຶກໂດຍ ທ່ານອິບນຸມາຈະ ຫ໌ ເລກທີ (227) ດ້ວຍສາຍລາຍງານຊ ໍ ຮີ ຫ໌.

«مَا بَيْنَ بَيْتِي وَمِنْبَرِي رَوْضَةٌ مِنْ رِيَاضِ الجَنَّةِ، وَمِنْبَرِي عَلَى حَوْضِي».

« ລະຫວ່າງເຮືອນຂອງຂ້ອຍ ແລະ ມິນບັຣຂອງຂ້ອຍ ຄືສວນໜຶ່ງຈາກບັນດາສວນສະຫວັນ, ແລະ ມິນບັຣຂອງຂ້ອຍຕັ້ງຢູ່ເທິງບໍ່ນ້ຳຂອງຂ້ອຍ »[1].

## ສອງ: ການສົ່ງເສີມໃນການໄປຢ້ຽມຢາມມັສຍິດນະບະວີ ອັນຊ່ຽງກຽດ

ຍ້ອນຄວາມປະເສີດເຫຼົ່ານີ້ ແລະ ອື່ນໆ ຈຶ່ງສົ່ງເສີມໃຫ້ມີການໄປຢ້ຽມຢາມ ມັສຍິດນະບະວີ ເພື່ອການລະຫມາດ ແລະ ເຮັດອີບາດະຫ໌ໃນນັ້ນ.

- ເປັນທີ່ສົ່ງເສີມສຳລັບຜູ້ປະກອບພິທີຮັຈ ແລະ ບຸກຄົນອື່ນໆ ໃນການໄປຢ້ຽມຢາມມັສຍິດອັນ-ນະບະວີ ກ່ອນການປະກອບພິທີຮັຈ ຫຼື ຫຼັງຈາກນັ້ນ, ແລະ ການໄປຢ້ຽມຢາມນີ້ບໍ່ໄດ້ເປັນເງື່ອນໄຂຂອງຮັຈ, ບໍ່ແມ່ນອົງປະກອບຫຼັກ ແລະ ບໍ່ແມ່ນຂໍ້ບັງຄັບຂອງມັນ, ແລະ ບໍ່ມີຄວາມກ່ຽວຂ້ອງໃດໆ ກັບຮັຈ.

- ບໍ່ມີເງື່ອນໄຂສຳລັບການໄປຢ້ຽມຢາມມັສຍິດຂອງທ່ານນະບີ ﷺ ວ່າຈະຕ້ອງມີຈຳນວນການລະມາດທີ່ແນ່ນອນ, ຫຼື ຕ້ອງພັກເຊົາເປັນໄລຍະເວລາທີ່ແນ່ນອນໃນນະຄອນມະດີນະຫ໌, ແຕ່ການໄປຢ້ຽມຢາມນັ້ນຖືວ່າສຳເລັດຜົນດ້ວຍການລະມາດພຽງຄັ້ງດຽວ ບໍ່ວ່າຈະເປັນ ລະມາດຟັຣດູ ຫຼື ການລະມາດຊຸນນະຮ໌, ແຕ່ວ່າຍິ່ງເພີ່ມຈຳນວນການລະມາດໃນນັ້ນຫຼາຍເທົ່າໃດ, ຜົນບຸນກໍຍິ່ງເພີ່ມຂຶ້ນເທົ່ານັ້ນ.

[1] ມຸດຕະຟາກຸ ວອະໄລ. ອັລບຸກອ໌ຣີ, ເລກທີ່ (1195) ແລະ ມຸສລິມ, ເລກທີ່ (1390).

- ແລະ ເປັນທີ່ສົ່ງເສີມສຳລັບຜູ້ທີ່ມາຢ້ຽມຢາມມັສຍິດອັນ-ນະບະວີ ໃຫ້ປະຕິບັດການລະຫມາດຟັຣດູທັງໝົດຢູ່ໃນມັສຍິດນັ້ນ ແລະ ລວມເຖິງການລະຫມາດສຸນນັດ; ເນື່ອງຈາກດັ່ງທີ່ໄດ້ກ່າວມາຂ້າງຕົ້ນວ່າ ການລະຫມາດໃນມັສຍິດນັ້ນ ປະເສີດກວ່າ ໜຶ່ງພັນການລະຫມາດໃນສະຖານທີ່ອື່ນໆ ຍົກເວັ້ນ ມັສຍິດອັລ-ຫະຣອມ.

## ສາມ:

## ມາລະຍາດໃນການຢ້ຽມຢາມມັສຍິດນະບະວີ

ເມື່ອມຸສລິມມາທີ່ມັສຍິດອັນນະບະວີ, ກໍເປັນສິ່ງທີ່ສົ່ງເສີມໃຫ້ລາວປະຕິບັດຕາມບົດຄຳສັ່ງທີ່ກ່ຽວຂ້ອງກັບມາລະຍາດຕໍ່ມັສຍິດທົ່ວໆ ໄປ, ແລະ ຕໍ່ມັສຍິດອັນນະບະວີ ໂດຍສະເພາະ, ເຊິ່ງມີດັ່ງນີ້:

ໃຫ້ມາທີ່ມັສຍິດດ້ວຍຄວາມສະຫງົບສະຫງ່ຽມ ແລະ ຄວາມສຸຂຸມ, ມີຄວາມສະອາດ, ມີຮູບລັກສະນະທີ່ດີງາມ, ແລະ ມີກິ່ນຫອມ, ຈາກທ່ານ ອະບູ ຮຸຣອຍເຣາະຫ໌ ຂໍອັລລ໋ອ ຮ໋ອ ຊ໋ອ ພໍພໍຣະໂທຕ໋ທ່ານ, ແທ້ຈິງແລ້ວ ທ່ານຣໍສຸລຂອງອັນລ໋ອ ﷺ ໄດ້ກ່າວວ່າ:

«إِذَا ثُوِّبَ لِلصَّلَاةِ فَلَا تَأْتُوهَا وَأَنْتُمْ تَسْعَوْنَ، وَأْتُوهَا وَعَلَيْكُمُ السَّكِينَةُ، فَمَا أَدْرَكْتُمْ فَصَلُّوا، وَمَا فَاتَكُمْ فَأَتِمُّوا، فَإِنَّ أَحَدَكُمْ إِذَا كَانَ يَعْمِدُ إِلَى الصَّلَاةِ فَهُوَ فِي صَلَاةٍ».

« ເມື່ອມີການອິກ່າມະຫ໌ສຳລັບການລະຫມາດ, ຈົ່ງຢ່າໄດ້ມາດ້ວຍຄວາມຟ້າວຟັ່ງ, ແຕ່ຈົ່ງມາດ້ວຍຄວາມສະຫງົບ, ສ່ວນທີ່ພວກທ່ານມາທັນ ກໍ່ຈົ່ງລະຫມາດ, ແລະ ສ່ວນທີ່ພວກທ່ານພາດໄປ ກໍ່ຈົ່ງລະຫມາດໃຫ້ຄົບຖ້ວນ, ເພາະແທ້ຈິງແລ້ວ ເມື່ອ

ພວກທ່ານຄົນໃດມຸ່ງໜ້າໄປສູ່ການລະຫມາດ ລາວກໍ່ຖືວ່າຢູ່ໃນການລະຫມາດແລ້ວ »[1], ແລະ ລາຍງານຈາກ ອະບີ ສະອີດ ອັລ-ຄຸດຣີ ຣ໌ດີຍັລລ໌ຮຸ ອັນຮຸ ແທ້ຈິງທ່ານນະບີ ﷺ ໄດ້ກ່າວວ່າ:

«الغُسْلُ يَوْمَ الجُمُعَةِ وَاجِبٌ عَلَى كُلِّ مُحْتَلِمٍ، وَأَنْ يَسْتَنَّ، وَأَنْ يَمَسَّ طِيبًا إِنْ وَجَدَ».

« ອາບນ້ຳໃນວັນສຸກ ວາຈິບ ສຳຫຼັບມຸສລິມສາວຫນຸ່ມທຸກຄົນ, ແລະ ໃຫ້ເຮັດຄວາມສະອາດຖູແຂ້ວ, ແລະ ໃຫ້ສຳຜັດໃສ່ນ້ຳຫອມ ຖ້າຫາກມີ»[2], ສ່ວນແມ່ຍິງ ເມື່ອນາງມາທີ່ມັສຍິດ, ນາງ ຈຳເປັນຕ້ອງປົກປິດຮ່າງກາຍດ້ວຍຮີຍາບຂອງນາງ, ແລະ ບໍ່ອະນຸຍາດໃຫ້ນາງໃຊ້ເຄື່ອງຫອມ (ນ້ຳຫອມ) ດັ່ງຄຳກ່າວຂອງນບີ ﷺ:

«إِذَا شَهِدَتْ إِحْدَاكُنَّ المَسْجِدَ فَلَا تَمَسَّ طِيبًا».

«ເມື່ອພວກທ່ານຍິງຄົນໃດໄປຮ່ວມທີ່ມັສຍິດ ຈົ່ງຢ່າໄດ້ໃສ່ນ້ຳຫອມ»[3].

ກ້າວຕີນຂວາ ເວລາເຂົ້າມັສຍິດນະບະວີ, ແລະ ກ່າວດຸອາເຂົ້າມັສຍິດ. ດັ່ງນັ້ນ, ຈຶ່ງເປັນສິ່ງທີ່ສົ່ງເສີມສຳລັບຜູ້ມາຢ້ຽມຢາມທີ່ຈະກ້າວຕີນຂວາ ເວລາເຂົ້າມັສຍິດນະບະວີ ເຊັ່ນດຽວກັບມັສຍິດອື່ນໆ, ແລະ ກ່າວດຸອານີ້ ກໍ່ຄື:

«بِسْمِ اللَّهِ، وَالسَّلَامُ عَلَى رَسُولِ اللَّهِ، اللَّهُمَّ اغْفِرْ لِي ذُنُوبِي وَافْتَحْ لِي أَبْوَابَ رَحْمَتِكَ».

---

[1] ບັນທຶກໂດຍ ອັລບຸກ່ອ໌ຣີ, ເລກທີ່ (636) ແລະ ມຸສລິມ, ເລກທີ່ (602).

[2] ເຫັນດີພ້ອມກັນ, ອັລບຸກ່ອ໌ຣີ, ເລກທີ່ (846) ແລະ ມຸສລິມ, ເລກທີ່ (858), ແລະ ອັລມຸຣຕະລິມ ແມ່ນຜູ້ທີ່ບັນລຸນິຕິພາວະ.

[3] ບັນທຶກໂດຍທ່ານມຸສລິມ ເລກທີ (443).

« ບິສມິລລາຮ, ອັສສະລາມຸ ອະລາ ຣະຊູລິລລາຮ, ອັລລ່ຮຸມ ມັກຟິຣລີ ຊຸນູບີ ອັຟຕະຫ໌ລີ ອັບອາບະ ເຣາະມະຕິກ» (ດ້ວຍພ ຣະນາມຂອງອັລລ່ຮ, ແລະຄວາມສັນຕິຈົ່ງມີແດ່ຣ່ຊູນຂອງອັລ ລ່ຮ, ໂອ້ອັລລ່ຮ ຂໍຊົງໂປດໃຫ້ການອະໄພຍະໂທດໃນບາບຂອງຂ້ ອຍແກ່ຂ້ອຍ, ແລະຂໍຊົງເປີດປະຕູແຫ່ງຄວາມເມດຕາຂອງພ ຣະອົງໃຫ້ແກ່ຂ້ອຍ)[1], ແລະ ເຊັ່ນດຽວກັນ ໃຫ້ກ່າວວ່າ:

«أَعُوذُ بِاللَّهِ العَظِيمِ، وَبِوَجْهِهِ الكَرِيمِ، وَسُلْطَانِهِ القَدِيمِ، مِنَ الشَّيْطَانِ الرَّجِيمِ».

ຄຳອ່ານ: «ອະອູຊຸ ບິລລາຮິລ ອາຊີມ, ອະບິວັດຮິຮິລ ກະລີມ, ອະສຸລຕ່ານິຮິລ ກ່ຕີມ, ມິນັ ໄຊຕອນ ນິຣຣ່ຈີມ»

ຄວາມໝາຍ: "ຂ້ອຍຂໍຄວາມຄຸ້ມຄອງຕໍ່ອັລລ່ຮ໌ຜູ້ຊົງຍິ່ງໃ ຫຍ່, ແລະ ດ້ວຍພຣະພັກອັນຊົງກຽດຂອງພຣະອົງ, ແລະ ດ້ວຍ ອຳນາດອັນດັ້ງເດີມຂອງພຣະອົງ, ໃຫ້ຮອດພົ້ນຈາກໄຊຕອນມ ານຮ້າຍຜູ້ຖືກສາບແຊ່ງ"[2].

ການປະຕິບັດລະຫມາດ ຕະຮີຍະຕຸລມັສຍິດ: ເປັນສຸນນະຫ໌ ສຳລັບຜູ້ທີ່ເຂົ້າໄປໃນມັສຍິດອັນ-ນະບະວີ ເພື່ອລະຫມາດໃນທີ່ ນັ້ນ, ໃຫ້ລະຫມາດສອງຣ່ກະອັດເປັນການຕະຮີຍະຕຸລມັສຍິດ ກ່ອນທີ່ຈະນັ່ງລົງ, ໂດຍມີລາຍງານຈາກທ່ານ ອະບູ ກ໋ຕາດະຫ໌ ອັ ລ-ຮາຣິຊ ບິນ ຣິບອີ ອັລ-ອັນຊ໋ຣີ ຣ່ດີຍັລລ່ຫຸ ອັນຮຸ ໄດ້ກ່າວວ່າ: ທ່ານນະບີ ຊ໋ລລ່ລ່ຫຸ ອະໄລຮິ ອະສ໋ລລັມ ໄດ້ກ່າວວ່າ:

«إِذَا دَخَلَ أَحَدُكُمُ المَسْجِدَ، فَلَا يَجْلِسْ حَتَّى يُصَلِّيَ رَكْعَتَيْنِ».

[1] ບັນທຶກໂດຍ ທ່ານອິບນຸມາຈະຫ໌ ຣ.ທ (771), ດ້ວຍສາຍລາຍງານທີ່ຖືກຕ້ອງ.

[2] ບັນທຶກໂດຍທ່ານອາບຸດາວຸດ ຣ.ທ (466), ດ້ວຍສາຍລາຍງານຊ່ຮ.ຮ.

« ເມື່ອພວກທ່ານຄົນໃດເຂົ້າໄປໃນມັສຍິດ, ຈົ່ງຢ່າໄດ້ນັ່ງຈົນກວ່າຈະລະຫມາດສອງຣັກອັດເສຍກ່ອນ »[1].

ການພະຍາຍາມເອົາໃຈໃສ່ຕໍ່ການລະຫມາດໃນບັນດາແຖວທຳອິດ; ເນື່ອງຈາກໃນນັ້ນມີຄວາມປະເສີດອັນຍິ່ງໃຫຍ່, ແລະ ສິ່ງດັ່ງກ່າວຈະບໍ່ເກີດຂຶ້ນໄດ້ ນອກຈາກດ້ວຍການຜ້ວນໄປຕັ້ງແຕ່ເນີ່ນໆ, ໂດຍມີລາຍງານຫາດີຊຈາກທ່ານອະບີ ຫຼຸຣອຍເຣາະຫ ຣ ດີຍັລລ ຮຸ ອັນຮຸ ວ່າ ທ່ານນະບີ ຊ ລ ລ ລ ຮຸ ອະໄລຮິ ອະສ ລ ລ ໄດ້ກ່າວວ່າ:

«لَوْ يَعْلَمُ النَّاسُ مَا فِي النِّدَاءِ وَالصَّفِّ الأَوَّلِ، ثُمَّ لَمْ يَجِدُوا إِلَّا أَنْ يَسْتَهِمُوا عَلَيْهِ لَاسْتَهَمُوا».

« ຫາກຜູ້ຄົນຮູ້ເຖິງຄວາມປະເສີດທີ່ມີໃນການອະຊານ ແລະ ແຖວທຳອິດ, ແລ້ວພວກເຂົາບໍ່ພົບວິທີການໃດ (ທີ່ຈະໄດ້ຮັບມັນ) ນອກຈາກການຈັບສະຫຼາກ, ແນ່ນອນວ່າພວກເຂົາຈະຈັບສະຫຼາກກັນ. »[2], ດັ່ງທີ່ທ່ານນະບີ ຊ ລ ລ ລ ຮຸ ອະໄລຮິ ອະສ ລ ລ ໄດ້ກ່າວໄວ້ແກ່ບັນດາ ຊ ຮ ບ ຫ ຂ ທ່ານ ຣ ດີຍັລລ ຮຸ ອັນຮຸ ວ່າ:

«تَقَدَّمُوا فَأْتَمُّوا بِي، وَلْيَأْتَمَّ بِكُمْ مَنْ بَعْدَكُمْ، لَا يَزَالُ قَوْمٌ يَتَأَخَّرُونَ حَتَّى يُؤَخِّرَهُمُ اللهُ».

«ພວກທ່ານຈົ່ງກ້າວມາຂ້າງໜ້າ ແລະ ປະຕິບັດຕາມຂ້ອຍ ແລະໃຫ້ຜູ້ທີ່ຢູ່ຫຼັງຈາກພວກທ່ານ ປະຕິບັດຕາມພວກທ່ານ, ຄ

[1] ເຫັນດີຮ່ອມກັນ, ອ້ ລ ບຸ ກ ຄ ຣິ, ເລກທີ່ (1171) ແລະ ມຸ ສ ລິມ, ເລກທີ່ (714).
[2] ເຫັນພ້ອມຕ້ອງກັນ, ອ ລ ບຸ ກ ຄ ຣິ: ເລກທີ່ (615) ແລະ ມຸ ສ ລິມ: ເລກທີ່ (437).

ນກຸ່ມໜຶ່ງຈະຍັງຄົງຊັກຊ້າຢູ່ທາງຫຼັງ ຈົນກວ່າອັລລໍຫ໌ຈະເຮັດໃ
ຫ້ພວກເຂົາຕ້ອງຢູ່ລ້າຫຼັງ»[1]

ສຳຫຼັບແມ່ຍິງແລ້ວ ສິ່ງທີ່ດີທີ່ສຸດສຳຫຼັບພວກນາງແມ່ນກ
ານລະຫມາດຢູ່ເຖາຫຼັງ, ແລະ ຢູ່ຫ່າງຈາກບັນດາຜູ້ຊາຍ, ຈາກ
ຮະດີຊຂອງທ່ານອະບີ ຮຸໄຣເຣາະຫ໌ ຣ໌ດີຍັລລ໌ ອັນຮຸ ເລົ່າວ່າ: ທ່າ
ນນະບີ ຊ໌ລລັລລ໌ຮຸ ອະໄລຮິ ອະສັລລ໌ ໄດ້ກ່າວວ່າ:

«خَيْرُ صُفُوفِ الرِّجَالِ أَوَّلُهَا، وَشَرُّهَا آخِرُهَا، وَخَيْرُ صُفُوفِ النِّسَاءِ آخِرُهَا، وَشَرُّهَا أَوَّلُهَا».

«ແຖວທີ່ດີທີ່ສຸດຂອງບັນດາຜູ້ຊາຍນັ້ນແມ່ນແຖວທຳອິດ, ແລະ ແຖວທີ່ຊົ່ວທີ່ສຸດຂອງມັນແມ່ນແຖວສຸດທ້າຍ, ແລະ ແຖ
ວທີ່ດີທີ່ສຸດຂອງບັນດາແມ່ຍິງແມ່ນແຖວສຸດທ້າຍ, ແລະ ແຖ
ວທີ່ຊົ່ວທີ່ສຸດຂອງມັນແມ່ນແຖວທຳອິດ»[2], ແຕ່ຖ້າຫາກພວກ
ນາງລະຫມາດຕາມລຳພັງ, ຫຼື ລະຫວ່າງພວກນາງ ແລະ ບັນດາ
ຜູ້ຊາຍມີສິ່ງກີດກັ້ນ, ດັ່ງທີ່ເປັນຢູ່ໃນມັດສະຢິດນະບະວີ, ແລ້ວ
ແຖວທີ່ດີທີ່ສຸດຂອງພວກນາງນັ້ນແມ່ນແຖວທຳອິດ; ເນື່ອງຈ
າກເຫດຜົນໃນເລື່ອງດັ່ງກ່າວໄດ້ໝົດໄປ.

ການລະຫມາດຢູ່ທາງຫລັງອີມ່າມ, ແລະ ໃຫ້ລະມັດລະວັງບໍ່ໃ
ຫ້ເຮັດກ່ອນອີມ່າມ; ເນື່ອງຈາກຫະດີຊລາຍງານຈາກ ທ່ານ ອະ
ບູ ຮຸໄຣເຣາະຫ໌ ຂໍອັລລ໌ຮ໌ຊົ່ງພໍພຣະໄທຕໍ່ເພິ່ນ, ວ່າ ທ່ານນະບີ ຊ໌
ລລັລລ໌ຮ໌ຮຸ ອະໄລຮິ ອະສັລລັມ ໄດ້ກ່າວວ່າ:

«إِنَّمَا جُعِلَ الإِمَامُ لِيُؤْتَمَّ بِهِ».

[1] ບັນທຶກໂດຍທ່ານມຸສລິມ ເລກທີ (438).
[2] ບັນທຶກໂດຍທ່ານມຸສລິມ ເລກທີ (440).

«ແທ້ຈິງ ອິມ່ານ (ຜູ້ນຳລະຫມາດ) ໄດ້ຖືກແຕ່ງຕັ້ງຂຶ້ນເພື່ອໃຫ້ປະຕິບັດຕາມ (ຫມາຍເຖິງໃຫ້ເຮົາເຮັດຫຼັງຈາກອິມ່ານເຮັດ) »[1].

ບໍ່ອະນຸຍາດໃຫ້ຜູ້ທີ່ລະຫມາດຢືນນຳຫນ້າອິມາມ ນອກຈາກໃນກໍລະນີຈຳເປັນ ແລະ ມັສຍິດເຕັມໄປດ້ວຍຜູ້ທີ່ຮ່ວມລະຫມາດ ຈົນບໍ່ສາມາດຫາບ່ອນລະຫມາດໄດ້ນອກຈາກທາງຫນ້າຂອງອິມາມ.

ໃຫ້ເອົາໃຈໃສ່ໃນການຍັດຊ່ອງຫວ່າງລະຫວ່າງແຖວ, ແລະ ຈັດແຖວໃຫ້ຊື່, ແຕ່ຕ້ອງລະມັດລະວັງການບຽດສຽງ ແລະ ສ້າງຄວາມລຳບາກໃຫ້ແກ່ຜູ້ຄົນ, ການຍ່າງຂ້າມບ່າໄຫລ່ຕັດຫນ້າຂອງພວກເຂົາ, ແລະ ການຍ່າງຜ່ານຫນ້າບັນດາຜູ້ທີ່ມາລະຫມາດ; ເພາະສິ່ງດັ່ງກ່າວອາດເຮັດໃຫ້ລາວຕົກຢູ່ໃນບາບ.

ການລະຫມາດໃນເຮົາເດາະຫ໌ ອັຊຊະຣີເຟະຫ໌ ສຳລັບຜູ້ທີ່ມີຄວາມສະດວກໃນການກະທຳດັ່ງກ່າວ; ເນື່ອງດ້ວຍຫະດີຊຂອງທ່ານອາບູ ຮຸຣອຍເຣາະຫ໌ ຣໍດີຢັລລ໋ອັນຮຸ, ໂດຍລາຍງານຈາກທ່ານນະບີ ﷺ ໄດ້ກ່າວວ່າ:

«مَا بَيْنَ بَيْتِي وَمِنْبَرِي رَوْضَةٌ مِنْ رِيَاضِ الجَنَّةِ، وَمِنْبَرِي عَلَى حَوْضِي».

<< ລະຫວ່າງເຮືອນຂອງຂ້ອຍ ແລະ ມິນບັຣຂອງຂ້ອຍ ແມ່ນສວນໜຶ່ງຈາກບັນດາສວນສະຫວັນ, ແລະ ມິນບັຣຂອງຂ້ອຍ ຕັ້ງຢູ່ເທິງບ່ໍນ້ຳຂອງຂ້ອຍ >>[2].

ແລະ ບໍ່ໄດ້ມີການລະບຸເຖິງຄວາມປະເສີດສະເພາະໃດໜຶ່ງກ່ຽວກັບການລະຫມາດໃນເຮົາເດາະຫ໌, ແຕ່ມີການຢັ້ງຢືນວ່າ

---

[1] ບັນທຶກໂດຍ ອັລບຸກຄ໋ອ, ເລກທີ່ (722) ແລະ ມຸສລິມ, ເລກທີ່ (417).

[2] ບັນທຶກຮ່ວມກັນ. ອັລບຸກຄ໋ອ, ເລກທີ່ (1195) ແລະ ມຸສລິມ, ເລກທີ່ (1390).

ມັນເປັນສອນໜຶ່ງຈາກບັນດາສອນຂອງສະຫວັນ -ດັ່ງຫະດີຊ ທີ່ລາຍງານໂດຍທ່ານອະບູ ຮຸຣອຍເຣາະ ຮ໌ ຣ໌ດີຍັລລ໌ລ ອັນຮຸ ກ່ອ ນໜ້ານີ້- ແລະ ການປະຕິບັດອິບາດະ ຮ໌ຕ່າງໆ ຈະມີຄວາມປະເ ສີດເພີ່ມຂຶ້ນ ດ້ວຍກັບຄວາມປະເສີດຂອງເວລາ ແລະ ສະຖານ ທີ່ຂອງມັນ.

* ແລະ ຜູ້ມາຢ້ຽມຢາມຄວນເລືອກເວລາທີ່ເໝາະສົມສຳລັ ບການລະໝາດໃນເຣົາເດາະ ຮ໌, ແລະ ຊອກຫາເວລາທີ່ມີຄວາມ ແອອັດນ້ອຍ, ດັ່ງນັ້ນຈຶ່ງບໍ່ອະນຸຍາດໃຫ້ບຽດສຽດພີ່ນ້ອງມຸສລິ ມຂອງ ຕົນ, ແລະ ບໍ່ກ້າວຂ້າມບ່າໄຫ່ຂອງຜູ້ຄົນ, ແລະ ບໍ່ຍ່າງຕັ ດໜ້າຜູ້ທີ່ພວມລະໝາດຢູ່ເພື່ອທີ່ຈະເຂົ້າໄປລະໝາດໃນສະຖາ ນທີ່ນັ້ນ; ເພາະການລະໝາດໃນເຣົາເດາະ ຮ໌ເປັນພຽງການລະ ໝາດສຸນນັດ (ນາຟີລະ ຮ໌) ຈຶ່ງບໍ່ຄວນບັນລຸເຖິງສິ່ງດັ່ງກ່າວດ້ວ ຍການກະທຳທີ່ຕ້ອງຫ້າມ (ຫະຣອມ), ເຊັ່ນດຽວກັນນີ້ ຜູ້ມາຢ້ຽ ມຢາມຄວນເອົາໃຈໃສ່ໃນການປະຕິບັດ ແລະ ຍຶດໝັ້ນຕາມກົ ດລະບຽບສະເພາະ ແລະ ການຈັດລະບຽບຕ່າງໆສຳລັບການເຂົ້ າສູ່ເຣົາເດາະ ຮ໌, ຕະຫຼອດຈົນການເລືອກເວລາທີ່ເໝາະສົມ, ແ ລະ ການໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ທີ່ຮັບຜິດຊອບໃນກາ ນຈັດລະບຽບການເຂົ້າຢ້ຽມຢາມນັ້ນ.

ການໃຊ້ເວລາໃຫ້ເປັນປະໂຫຍດ ດ້ວຍການເພີ່ມພູນການປ ະກອບຄຸນງາມຄວາມດີ ທີ່ເຮັດໃຫ້ໃກ້ຊິດຕໍ່ພຣະຜູ້ສ້າງຂອງລາ ອ ຜູ້ສູງສົ່ງ ເຊັ່ນ: ການລະຫມາດ, ການອ່ານອັລກຸຣອານ, ການ ລຳລຶກ, ການຂໍດຸອາ, ການເຂົ້າຮ່ວມສະຖານທີ່ຊຸມນຸມເພື່ອກາ ນລຳລຶກ, ບົດຮຽນທາງດ້ານວິຊາການ, ວົງການຮຽນການສອນ ອັລກຸຣອານອັນປະເສີດ, ແລະ ອື່ນໆ.

ການໃຫ້ກຽດຄຳພີຂອງອັລລໍຮ໌ ອັຊຊະ ອະຈັ ແລະ ການປົກປ້ອງຮັກສາມັນຈາກການທຳລາຍແຜ່ນເຈ້ຍຂອງມັນ, ແລະ ການຂີດຂຽນໃສ່ມັນ, ຫຼື ການດູຖູກ ແລະ ການໝິ່ນປະໝາດ ດ້ວຍການວາງເກີບໄວ້ຂ້າງມັນ, ຫຼື ການວາງມັນໄວ້ເທິງພື້ນດິນ ແລະ ສິ່ງອື່ນໆ ໃນທຳນອງນີ້, ດັ່ງທີ່ພຣະອົງກ່າວວ່າ:

﴿ذَٰلِكَ وَمَن يُعَظِّمْ شَعَـٰٓئِرَ ٱللَّهِ فَإِنَّهَا مِن تَقْوَى ٱلْقُلُوبِ﴾

(ດັ່ງກ່າວນັ້ນແຫຼະ ແລະ ຜູ້ໃດທີ່ຍົກຍ່ອງບັນດາເຄື່ອງໝາຍຂອງອັລລໍຮ໌ ແທ້ຈິງ ມັນແມ່ນສ່ວນໜຶ່ງຈາກຄວາມຢຳເກຮງຢ້ານກົວຂອງຫົວໃຈ) [ສູເຣາະຫ໌ ອັລ-ຮັຈ : 32].

ການລົດສາຍຕາວົງຈາກສິ່ງທີ່ອັລລໍຮ໌ ອັຊຊະ ອະຈັ ຊົງຫ້າມ: ດັ່ງນັ້ນ ຈົ່ງຈຳເປັນສຳລັບຜູ້ມາຢ້ຽມຢາມມັສຍິດອັນ-ນະບະ ອີ ທີ່ຈະຕ້ອງລົດສາຍຕາວົງຈາກສິ່ງທີ່ບໍ່ອະນຸຍາດໃຫ້ມອງເບິ່ງ, ແລະ ຄວນຮັບຮູ້ເຖິງຄວາມຮ້າຍແຮງຂອງການເຮັດບາບໃນສະຖານທີ່ແຫ່ງນີ້, ພ້ອມທັງບົດວົງໂທດທີ່ຈະຕາມມາ, ເພາະແທ້ຈິງແລ້ວ ການເຮັດບາບທັງຫຼາຍຈະທະວີຄວາມຮຸນແຮງຂຶ້ນທັງໃນດ້ານປະລິມານແລະຄຸນນະພາບ ຕາມຄວາມຍິ່ງໃຫຍ່ຂອງເວລາແລະສະຖານທີ່, ແລະ ການປະຕິບັດຄຸນງາມຄວາມດີກໍ່ຊຸ່ນດຽວກັນ. ແລະ ແມ່ຍິງມຸສລິມຕ້ອງເອົາໃຈໃສ່ໃນການຄຸມຮີຈາບຕາມຫຼັກການສາສະໜາ, ແລະ ບໍ່ເປີດເຜີຍການປະດັບປະດາ ເພື່ອບໍ່ໃຫ້ເກີດຟິດນະຫ໌ແກ່ບັນດາຜູ້ຊາຍ, ເພາະແທ້ຈິງແລ້ວ ສິ່ງດັ່ງກ່າວນີ້ເປັນບາບອັນໃຫຍ່ຫຼວງ.

ຕ້ອງລະມັດລະວັງການຫຍຸ້ງຢູ່ກັບການຖ່າຍຮູບ ຫຼື ການເບິ່ງຮູບພາບ ແລະ ຄຶບວິດີໂອໃນໂທລະສັບມືຖື, ແລະ ເລື່ອງນີ້ຈະຍິ່

ງມີຄວາມອັນຕະລາຍຮ້າຍແຮງຂຶ້ນ ຖ້າຫາກວ່າຮູບພາບ ແລະ ຄລິບວິດີໂອເຫຼົ່ານີ້ເປັນສິ່ງທີ່ຖືກຫ້າມ.

ການປົກປ້ອງມັສຍິດອັນ-ນະບະວີໃຫ້ປາສະຈາກທຸກສິ່ງທີ່ບໍ່ເໝາະສົມ ເຊັ່ນ: ການຜິດຖຽງກັນ, ການສົ່ງສຽງດັງ, ການປະກາດຫາຂອງທີ່ເສຍ, ການຊື້ຂາຍ, ແລະ ສິ່ງອື່ນໆ ທີ່ຄ້າຍຄືກັນ ຈາກບັນດາສິ່ງທີ່ບໍ່ສົມຄວນໃນມັສຍິດນັ້ນ ແລະ ໃນມັສຍິດອື່ນໆ; ອີງຕາມຮະດີດຂອງ ທ່ານ ອະບູ ຮຸຣອຍເຣາະຫ໌ ຣໍດີຍັລລໍຮຸ ອັນຮຸ ທີ່ລາຍງານຈາກ ທ່ານນະບີ ﷺ , ທ່ານໄດ້ກ່າວວ່າ:

«إِذَا رَأَيْتُمْ مَنْ يَبِيعُ أَوْ يَبْتَاعُ فِي المَسْجِدِ، فَقُولُوا: لَا أَرْبَحَ اللَّهُ تِجَارَتَكَ، وَإِذَا رَأَيْتُمْ مَنْ يَنْشُدُ فِيهِ ضَالَّةً، فَقُولُوا: لَا رَدَّ الله عَلَيْكَ».

« ເມື່ອພວກທ່ານເຫັນໃຜກໍ່ຕາມເຮັດການຊື້ຂາຍໃນມັສຍິດ ກໍ່ຈົ່ງກ່າວກັບລາວວ່າ: ຂໍອັລລໍຫ໌ຢ່າໄດ້ຊົງເຮັດໃຫ້ການຄ້າຂາຍຂອງເຈົ້າມີກຳໄລເລີຍ, ແລະ ເມື່ອພວກທ່ານເຫັນໃຜກໍ່ຕາມປະກາດຫາຂອງທີ່ເສຍໃນນັ້ນ ກໍ່ຈົ່ງກ່າວກັບລາວວ່າ: ຂໍອັລລໍຫ໌ຢ່າໄດ້ຊົງໃຫ້ສິ່ງນັ້ນກັບຄືນແກ່ເຈົ້າເລີຍ»[1].

ການໃສ່ໃຈຕໍ່ຄວາມສະອາດສ່ວນຕົວ, ແລະ ການລະມັດລະວັງຈາກກິ່ນເໝັນ ເຊັ່ນ: ກະທຽມ, ຜັກບົ່ວ, ຄວັນຢາສູບ, ແລະ ເຫງື່ອ, ແລະ ສິ່ງອື່ນໆ ທີ່ຄ້າຍຄືກັນ ເຊິ່ງສ້າງຄວາມລົບກວນແກ່ພີ່ນ້ອງຜູ້ຮ່ວມລະໝາດ; ຈາກຮະດີຊຂອງທ່ານ ຈາບິຣ ບິນ ອັບດຸລລໍຫ໌ ຣໍດີຍັລລໍຮຸ ອັນຮຸ ໄດ້ກ່າວວ່າ: ແທ້ຈິງ ທ່ານຣໍສຸລຂອງ ອັລລໍຮ໌ ﷺ ໄດ້ກ່າວວ່າ:

---

[1] ບັນທຶກໂດຍ ອັດຕິຣມິຊີ ເລກທີ່ (1321), ແລະ ອິບນຸ ຄຸ‌ໃຊມະ‌ຫ໌ ເລກທີ່ (1305), ດ້ວຍສາຍລາຍງານທີ່ຖືກຕ້ອງ.

«مَنْ أَكَلَ ثُومًا أَوْ بَصَلًا، فَلْيَعْتَزِلْنَا - أَوْ قَالَ: فَلْيَعْتَزِلْ مَسْجِدَنَا - وَلْيَقْعُدْ فِي بَيْتِهِ».

« ຜູ້ໃດທີ່ກິນຜັກທຽມ ຫຼື ຜັກບົ່ວ, ກໍ່ຈົ່ງຫຼີກຫ່າງຈາກພວກເຮົາ - ຫຼື ທ່ານໄດ້ກ່າວວ່າ: ຈົ່ງຫຼີກຫ່າງຈາກມັສຍິດຂອງພວກເຮົາ - ແລະ ຈົ່ງຢູ່ໃນເຮືອນຂອງຕົນ »[1].

ການເອົາໃຈໃສ່ຄວາມສະອາດຂອງມັສຍິດນະບະວີ ແລະ ບໍ່ຖົ່ມຂີ້ເຫຍື້ອພາຍໃນມັສຍິດ ແລະ ບໍລິເວນເດີ່ນຂອງມັສຍິດ, ເຊັ່ນ: ເສດອາຫານ ແລະ ຜ້າປູອາຫານລະສົນອົດ ໂດຍສະເພາະໃນເດືອນຣໍມະດອນ, ຫຼື ການຖົ່ມນ້ຳລາຍຕາມທາງຍ່າງ ແລະ ເດີ່ນມັສຍິດ, ແລະ ອື່ນໆ.

ຫຼີກລ້ຽງການລະຫມາດໃນທາງຍ່າງ, ບໍລິເວນທາງເຂົ້າປະຕູ ແລະ ສະຖານທີ່ທີ່ແອອັດ, ເພາະວ່າສິ່ງດັ່ງກ່າວຈະກໍ່ໃຫ້ເກີດຜົນເສຍ, ເປັນການກີດຂວາງເສັ້ນທາງ, ແລະ ລົບກວນບັນດາມຸສະລິມ.

ການລະຫມາດຂອງຜູ້ຊາຍ ແລະ ແມ່ຫຍິງແມ່ນໃຫ້ຢູ່ໃນສະຖານທີ່ ທີ່ຖືກກຳນົດໄວ້ສະເພາະສຳຫລັບແຕ່ລະຝ່າຍ, ພາຍໃນມັສຍິດອັນນະບະວີ ຫຼື ໃນບໍລິເວນເດີ່ນຂອງມັສຍິດ, ແລະ ຜູ້ຊາຍບໍ່ໃຫ້ລະຫມາດຢູ່ທາງຂ້າງແມ່ຍິງ, ແລະ ແມ່ຍິງກໍ່ບໍ່ໃຫ້ລະຫມາດຢູ່ທາງຂ້າງຜູ້ຊາຍ, ແລະ ຈົ່ງລະມັດລະວັງການຢືນລ້ຳໜ້າອິມາມ (ຜູ້ນຳລະຫມາດ) ເທົ່າທີ່ຈະເປັນໄປໄດ້.

ກ້າວຕີນຊ້າຍອອກກ່ອນ ເວລາອອກຈາກມັສຍິດ, ແລະ ກ່າວດຸອາເວລາອອກວ່າ:

---

[1] ບັນທຶກໂດຍ ອັລບຸກຄ໌ຣີ, ເລກທີ່ (7359) ແລະ ມຸສລິມ, ເລກທີ່ (564).

«اللَّهُمَّ إِنِّي أَسْأَلُكَ مِنْ فَضْلِكَ».

«ອັລລໍຮຸມມະ ອິນນີ ອັສອະລຸກະ ມິນ ຟັດລິກ»

ຄວາມໝາຍວ່າ: ໂອ້ອັລລໍຫ໌ ແທ້ຈິງຂ້ອຍຂໍຕໍ່ພຣະອົງຈາກສ່ວນໜຶ່ງຂອງຄວາມໂປດປານຂອງພຣະອົງ[1], ຫລື ກ່າວສໍລະວາດຕໍ່ທ່ານນະບີ ﷺ ແລະກ່າວວ່າ:

«رَبِّ اغْفِرْ لِي ذُنُوبِي، وَافْتَحْ لِي أَبْوَابَ فَضْلِكَ».

«ຣອບບິກ ຟິຣລີ ຊຸນູບີ, ວັຟຕະຫ໌ລີ ອັບວາບະ ຟັດລິກ»

(ໂອ້ອັລລໍຮ໌ ຂໍຊົງໂປດໃຫ້ການອະໄພຍະໂທດແກ່ຂ້ອຍໃນຄວາມຜິດບາບຂອງຂ້ອຍ, ແລະ ຂໍຊົງໂປດເປີດປະຕູແຫ່ງຄວາມໂປດປານຂອງພຣະອົງໃຫ້ແກ່ຂ້ອຍ)[2].

## ສີ: ຂໍ້ບັນຍັດ ແລະ ມາລະຍາດວ່າດ້ວຍການຢ້ຽມຢາມກຸໂບຣຂອງທ່ານນະບີ ຊ່ລລັລລ໋ຮຸ ອະໄລຮິ ວະຊ່ລລ໋ຳ ແລະ ກຸໂບຣສະຫາຍທັງສອງຂອງທ່ານ ຣ໋ດິຍັລລ໋ຮຸ ອັນຮຸມາ

* ເປັນທີ່ສົ່ງເສີມໃຫ້ມີການໄປຢ້ຽມຢາມກຸໂບຣຂອງທ່ານນະບີ ﷺ ແລະ ກຸໂບຣຂອງສອງສໍຫາບະຫ໌ຂອງທ່ານຄື: ອະບູ ບັກກ ຣ໋ ແລະ ອຸມັຣ ຣ໋ດິຍັລລ໋ຫຸ ອັນຮຸມາ, ສໍາລັບຊາວນະຄອນມະດີນະຫ໌ ແລະ ຜູ້ທີ່ເດີນທາງມາຢ້ຽມນະຄອນດັ່ງກ່າວໃນຖານະແຂກ ແລະ ຜູ້ມາຢ້ຽມຢາມ; ເນື່ອງຈາກບັນດາຫຼັກຖານທົ່ວໄປທີ່ບົ່ງ

[1] ບັນທຶກໂດຍທ່ານມຸສລິມ ເລກທີ (713).

[2] ບັນທຶກໂດຍ ອັດຕິຣມິຊີ ເລກທີ່ (314), ດ້ວຍສາຍລາຍງານທີ່ຖືກຕ້ອງ.

ບອກເຖິງການທີ່ອິສລາມໄດ້ກ່າຫນົດໃຫ້ມີການຢ້ຽມຢາມບັນດາກຸໂບຣ, ແລະ ໜຶ່ງໃນນັ້ນກໍຄືຄຳກ່າວຂອງທ່ານ ﷺ ທີ່ວ່າ:

«نَهَيْتُكُمْ عَنْ زِيَارَةِ القُبُورِ، فَزُورُوهَا».

«ຂ້າພະເຈົ້າໄດ້ຫ້າມພວກທ່ານຈາກການໄປຢ້ຽມຢາມກຸໂບຣ, ແຕ່ ຕອນນີ້ພວກທ່ານຈົ່ງໄປຢ້ຽມຢາມມັນ»[1].

ແລະ ສິ່ງທີ່ໄດ້ບົ່ງບອກເຖິງຄວາມປະເສີດຂອງການກ່າວສະລາມແດ່ທ່ານນະບີ ﷺ ຫຼັງຈາກການເສຍຊີວິດຂອງທ່ານນັ້ນ ກໍຄືຈາກຄຳກ່າວຂອງທ່ານນະບີ ﷺ:

«مَا مِنْ أَحَدٍ يُسَلِّمُ عَلَيَّ، إِلَّا رَدَّ اللهُ عَزَّ وَجَلَّ إِلَيَّ رُوحِي حَتَّى أَرُدَّ عَلَيْهِ السَّلَامَ».

«ບໍ່ມີຜູ້ໃດທີ່ກ່າວສະລາມມາຍັງຂ້ອຍ, ນອກຈາກອັລລໍຮ໌ ຜູ້ຊົງຍິ່ງໃຫຍ່ ແລະ ຊົງສູງສົ່ງ ຈະຊົງຄືນວິນຍານຂອງຂ້ອຍໃຫ້ແກ່ຂ້ອຍ ຈົນກວ່າຂ້ອຍຈະໄດ້ຕອບສະລາມແກ່ລາວ»[2].

* ແລະ ບໍ່ມີບົດບັນຍັດໃຫ້ແມ່ຍິງໄປຢ້ຽມຢາມກຸໂບຣຂອງທ່ານນະບີ ﷺ ແລະ ກຸໂບຣຂອງບຸກຄົນອື່ນຈາກບັນດາມຸສລິມ, ເພາະການໄປຢ້ຽມຢາມກຸໂບຣນັ້ນເປັນບົດບັນຍັດສຳຫຼັບຜູ້ຊາຍ, ສຳຫຼັບແມ່ຍິງແລ້ວພວກນາງຖືກຫ້າມຈາກການໄປຢ້ຽມຢາມກຸໂບຣ, ດັ່ງທີ່ມີລາຍງານຈາກທ່ານ ອິບນຸ ອັບບາສ ຣ.ດ.ຍ.ລ.ຮ. ທ່ານໄດ້ກ່າວວ່າ:

«لَعَنَ رَسُولُ اللَّهِ ﷺ زَائِرَاتِ القُبُورِ، وَالمُتَّخِذِينَ عَلَيْهَا المَسَاجِدَ وَالسُّرُجَ».

«ທ່ານລໍຊູລຂອງອັລລໍຮ໌ ﷺ ໄດ້ສາບແຊ່ງບັນດາແມ່ຍິງທີ່ໄປຢ້ຽມຢາມບັນດາກຸໂບຣ, ແລະ ບັນດາຜູ້ທີ່ຍຶດຖືເອົາເທິງມັນເ

---

[1] ບັນທຶກໂດຍທ່ານມຸສລິມ ເລກທີ (977).

[2] ບັນທຶກໂດຍ ທ່ານອະຫ໌ມັດ ໃນໜັງສືມຸສນັດ ເລກທີ (10815), ດ້ວຍສາຍລາຍງານຮາຊັນ.

ບັນບັນດາມັສຍິດ ແລະ ສ້າງໂດມໄຟປະດັບຫຼຸມຝັງສົບ»[1], ລາຍ
ງານຈາກທ່ານອາບູ ຮຸຣອຍເຣາะห์ ຣ.ດ.ຢ.ລ.ອ.ນ.ຮ:

«أَنَّ رَسُولَ اللَّهِ ﷺ لَعَنَ زَوَّارَاتِ القُبُورِ».

« ແທ້ຈິງ ທ່ານຣໍຊູລ ລຸລລ.ห์ ﷺ ໄດ້ສາບແຊ่ງບັນດາແມ่ຍິງ
ທີ่ໄດ้ໄປຢຽมຢามกุโบธ »[2].

* ແລະ บ่ปันທີ่ອะนุมัดให้ออกเดินทางเพื่อไปຢ้ຽมຢา
มกุโบธຂอງท่านนะบี ﷺ ໂดยตั้งเจตตะนาในการเดินทา
งของลาอเพื่อຢ้ຽมຢามพຽงแต่กุโบธเท่านั้น, แต่ทะอ่าใ
ห้ลาอตั้งเจตตะนาในการเดินทางของลาอเพื่อไปຢ้ຽม
ยามมัสยิด ແລะ เธัดการละหมาดในนั้น, ดังนั้น เมื่อลา
อได้เข้าพักในมะดินะห์แล้อ จึ่งมิบัดบันยัดให้ลาอไปຢ้ຽ
มยามกุโบธได้, เฉ่นดຽอกับที่มิบัดบันยัดสำหรับลาอเมือ
งที่อาใสยู่ในมะดินะห์; เมื่องจากท่านนะบี ﷺ ก่าอ่า:

«لَا تُشَدُّ الرِّحَالُ إِلَّا إِلَى ثَلَاثَةِ مَسَاجِدَ: مَسْجِدِي هَذَا، وَمَسْجِدِ الحَرَامِ، وَمَسْجِدِ الأَقْصَى».

«บ่ให้มีการเดินทาง นอกจากไปยังสามมัสยิดคือ: มั
สยิดของข้อยแห่งนี้, มัสยิดอัลหะรอม ແລะ มัสยิดอัลอั
กซอ»[3].

---

[1] บันทึกโดย อะบู ดาอูด ลำดับที่ (3236), แลละ อัดติรมิซี ลำดับที่ (320), แลละ อันนะซาอี ลำดับที่ (2043).

[2] บันทึกโดย อัดติรมิซี ลำดับที่ (1056), แลละ อิบนุมาจะห์ ลำดับที่ (1576), ด้อยสายลายงานที่หะซัน.

[3] บันทึกโดย อัลบุคอรี, ลำดับที่ (1189) แลละ มุสลิม, ลำดับที่ (1397), แลละ สำนอบแผ่นของมุสลิม.

ມາລະຍາດທີ່ອິສລາມໄດ້ກ່າຫນົດໃນການຍ້ຽມຍາມກຸໂບຣ ຂອງທ່ານນະບີ ຊ່ວລ້ວລ່ຽ ອະລັຍຮິ ອະສັລລັມ ແລະ ກຸໂບຣຂອ ງຊ່ຫາບະຫ໌ທັ້ງສອງຂອງທ່ານ ຣ໌ດີຍັລລ່ຽ ອັນຮຸມາ.

ຜູ້ມາຢ້ຽມຍາມຢືນຢູ່ຕ່ຳໜ້າຫລຸມຝັງສົບຂອງທ່ານນະບີ ໂດ ຍຜິນໜ້າໄປທາງຫລຸມຝັງສົບ, ຈາກນັ້ນໃຫ້ກ່າວສະລາມແກ່ທ່ ານນະບີດ້ວຍຄວາມສຸພາບ ແລະ ຫຼຸດສຽງລົງ, ໂດຍກ່າວວ່າ: (ຂໍ ຄວາມສັນຕິສຸກ ຄວາມເມດຕາແຫ່ງອັລລ່ຽ ແລະ ຄວາມຈະເ ລີນແຫ່ງພຣະອົງຈົ່ງມີແດ່ທ່ານ ໂອ້ທ່ານສາດສະດາທູດຂອງອັ ລລ່ຽ), ແລະ ຖ້າຫາກຈະກ່າວເພີ່ມເຕີມຈາກນັ້ນ ໂດຍກ່າວວ່າ : (ຂ້ອຍຂໍປະຕິຍານຕົນວ່າ ທ່ານໄດ້ເຜີຍແຜ່ສານແລ້ວ, ແລະ ໄ ດ້ປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍຢ່າງສົມບູນ, ແລະ ໄດ້ຕ້ ກເຕືອນປະຊາຊາດແລ້ວ, ແລະ ໄດ້ຕໍ່ສູ້ໃນຫົນທາງຂອງອັລລ່ຽ ຢ່າງແທ້ຈິງ) ກໍບໍ່ມີຄວາມຜິດແຕ່ຢ່າງໃດ; ເພາະທັງໝົດນີ້ລ້ວ ນແຕ່ເປັນຄວາມຈິງ.

ແລ້ວໃຫ້ກ້າວໄປທາງຂວາໜຶ່ງບາດກ້າວ ເພື່ອຫັນໜ້າໄປທ າງຫລຸມຝັງສົບຂອງ ອະບູ ບັກຣ໌ ອັດຊິດດີກ ຣ໌ດີຍັລລ່ຽ ອັນຮຸ ພ້ອມກ່າວວ່າ: (ອັສສະລາມ ມຸອະໄລກະ ໂອ້ ອະບູ ບັກຣ໌ ອັດຊິດ ດີກ, ອັສສະລາມ ມຸອະໄລກະ ໂອ້ ຄໍລີຟະຮ໌ຂອງຣ໌ຊຸລລ່ວ ﷺ, ຂໍ ອັລລ່ວ ﷻ ຈົ່ງພໍພຣະໄທຕ່ຳທ່ານ ແລະ ໃຫ້ທ່ານໄດ້ຮັບຄວາມພໍໃຈ, ແລະ ຂໍພຣະອົງຈົ່ງຕອບແທນຄວາມດີງາມແກ່ທ່ານແທນປະ ຊາຊາດຂອງ ມຸຮຳມັດ ﷺ).

ແລ້ວໃຫ້ກ້າວໄປທາງຂວາໜຶ່ງກ້າວ ເພື່ອໃຫ້ຫັນໜ້າໄປທາ ງຫລຸມຝັງສົບຂອງ ອຸມັຣ ອິບນຸ ຄ໋ຕ໊ຕ ຣ໌ດີຍັລລ່ຽ ອັນຮຸ ພ້ອມກ່າວວ່າ: ( ອັສສະລາມ ມຸອະໄລກະ ໂອ້ ອຸມັຣ ອັລຟ໋ຣຸກ,

ຂໍອັລລໍຫ໌ຊົງພໍພຣະໄທຕ່ຳທ່ານ ແລະ ຊົງເຮັດໃຫ້ທ່ານພໍໃຈ, ແລ ະ ຂໍພຣະອົງຊົງຕອບແທນຄວາມດີງາມແກ່ທ່ານແທນປະຊາຊ າດຂອງ ມຸຮັມມັດ ﷺ ).

ທ່ານອັບດຸລລໍຫ໌ ບິນ ອຸມັຣ ຣ໌ດີຍັລລໍຮຸ ອັນຮຸມາ ເມື່ອທ່ານ ກັບມາຈາກການເດີນທາງ ທ່ານເຄີຍໄປທີ່ກຸໂບຣຂອງທ່ານນະ ບີ ﷺ ແລ້ວຈຶ່ງກ່າວວ່າ: «ຂໍຄວາມສັນຕິສຸກ ຈົ່ງມີແດ່ທ່ານ ໂອ້ ທ່ານສາດສະດາທູດແຫ່ງອັລລໍຮ໌, ຂໍຄວາມສັນຕິສຸກ ຈົ່ງມີແດ່ ທ່ານ ໂອ້ທ່ານອະບູບັກຣ໌, ຂໍຄວາມສັນຕິສຸກ ຈົ່ງມີແດ່ທ່ານ ໂອ້ ທ່ານພໍ່ຂອງຂ້ອຍ, ແລ້ວເພິ່ນກໍຈາກໄປ»[1].

ບໍ່ຕ້ອງສຳຜັດຜ່ານກຳແພງກຸໂບຣ ແລະ ຮົ້ວ ແລະ ບໍ່ຈູບມັນ:

ທ່ານອີຫມ່ຳມາລິກ ຂໍອັລລໍຫ໌ ຊົງເມດຕາຕໍ່ທ່ານ ໄດ້ກ່າວວ່ າ: "ເມື່ອໃຫ້ສະລາມແກ່ທ່ານນະບີ ﷺ ໃຫ້ຢືນໂດຍຫັນໜ້າໄປທ າງຫຼຸມຝັງສົບ; ບໍ່ແມ່ນໄປທາງກິບລັດ ແລະ ຂ້ຳໃກ້ ແລ້ວກໍ່ໃຫ້ ສະລາມ ແລະ ບໍ່ໃຫ້ສຳຜັດກຳແພງຝັງສົບດ້ວຍມື"[2].

ບັນດາອີມ່າມໄດ້ມີຄວາມເຫັນເປັນເອກະພາບກັນວ່າບໍ່ເປັ ນທີ່ອະນຸມັດໃຫ້ສຳຜັດກຸໂບຣຂອງທ່ານນະບີ ﷺ ດ້ວຍມື ແລະ ບໍ່ໃຫ້ຈູບກຸໂບຣ.

ບໍ່ໃຫ້ຢືນຢູ່ທີ່ຫລຸມຝັງສົບເປັນເວລາດົນ, ໃຫ້ສະລາມແລ້ວ ກໍ່ຍ່າງກັບອອກໄປ.

---

[1] ບັນທຶກໂດຍ ອັລໄບຮະກີ ໃນ ອັສ ສຸນັນ ອັລກຸບຣໍ ເລກທີ່ (10271), ດ້ວຍສາຍລາຍງານຊ່ຮີຫ໌.

[2] ໜັງສືອັລ-ຊິຟາ ຂອງອັລ-ກໍດີ ອີຍາດ (2/ 199).

ທ່ານອິຫມ່ານມາລິກ ຂໍອັລລໍຫ໌ເມດຕາທ່ານ ໄດ້ກ່າວວ່າ: "ຂ້າພະເຈົ້າບໍ່ເຫັນຄວນທີ່ຈະຢຸດຢູ່ທີ່ກຸໂບຮຂອງທ່ານນະບີ ﷺ ເພື່ອຂໍດຸອາ, ແຕ່ໃຫ້ກ່າວສະລາມ ແລະ ຍ່າງຜ່ານໄປ"[1].

ທ່ານນາຟີອ໌ ຂໍອັລລໍຫ໌ເມດຕາທ່ານ ຍັງໄດ້ກ່າວໄວ້ວ່າ: “ທ່ານອິບນຸ ອຸມັຣ ເຄີຍໃຫ້ສະລາມທີ່ກຸໂບຮ.. ຂ້ອຍໄດ້ເຫັນທ່ານຫນຶ່ງຮ້ອຍຄັ້ງ ແລະ ຫຼາຍກວ່ານັ້ນ ທີ່ທ່ານມາທີ່ກຸໂບຮ ແລ້ວກ່າວວ່າ: ຂໍຄວາມສັນຕິຈົ່ງມີແດ່ທ່ານນະບີ ﷺ. ຂໍຄວາມສັນຕິຈົ່ງມີແດ່ທ່ານອະບູບັກຣ໌, ຂໍຄວາມສັນຕິຈົ່ງມີແດ່ພໍ່ຂອງຂ້ອຍ, ຫຼັງຈາກນັ້ນ ທ່ານກໍ່ກັບໄປ”[2].

ແລະ ສ່ວນການທີ່ຜູ້ມາຢ້ຽມຢາມບາງຄົນໄປສົ່ງສຽງດັງທີ່ກຸໂບຮຂອງທ່ານ ຊຸລລັລລໍຮຸ ອະລັຍຮິ ອະສັລລັມ ແລະ ຢືນຢູ່ບ່ອນນັ້ນເປັນເວລາດົນ ກໍຖືເປັນການຂັດກັບສິ່ງທີ່ອິສລາມໄດ້ກໍາຫນົດໄວ້.

ບໍ່ອະນຸຍາດໃຫ້ວິງວອນຂໍຕໍ່ທ່ານຣໍຊູລ ຊຸລລັລລໍຮຸ ອະໄລຮິ ອະສັລລໍາ ຫຼື ສິ່ງອື່ນໃດຈາກສິ່ງຖືກສ້າງ ເພື່ອນໍາມາເຊິ່ງຜົນປະໂຫຍດ ຫຼື ປັດເປົ່າຄວາມອັນຕະລາຍ, ຫຼື ຂໍໃຫ້ຕອບສະຫນອງຄວາມຕ້ອງການ, ຫຼື ປົດເປື້ອງຄວາມທຸກຮ້ອນ, ຫຼື ປິ່ນປົວຜູ້ປ່ວຍ, ຫຼື ຂໍການຊະຟາອະຫ໌, ຫຼື ຂໍໃຫ້ລອດພົ້ນຈາກການວ່ໍາໂທດ, ຫຼື ການວິງວອນຂໍ (ດຸອາ) ອື່ນໆ ໃນທໍານອງນີ້, ເພາະແທ້ຈິງແລ້ວການວິງວອນຂໍຕໍ່ສິ່ງອື່ນນອກເໜືອຈາກອັລລໍຫ໌ ໃນສິ່ງທີ່ບໍ່ມີຜູ້ໃດມີຄວາມສາມາດໃຫ້ໄດ້ນອກເໜືອຈາກອັລລໍຫ໌ນັ້ນ ແມ່ນ

---

[1] ຫນັງສືອັຊ-ຊິຟາ ຂອງອັລ-ກໍາດີ ອີຍາດ (2/ 199).

[2] ບັນທຶກໂດຍ ທ່ານອັລ-ອາຈຸຣີ ໃນຫນັງສືອັຊ-ຊະຣີອະຫ໌ (5/2374) ແລກທີ (1853).

ເປັນສິ່ງຕ້ອງຫ້າມ ແລະ ເປັນຊິຣິກໃຫຍ່, ດັ່ງທີ່ອັລລໍຮ໌ ຕະອາລ າ ໄດ້ກ່າວວ່າ:

﴿وَقَالَ رَبُّكُمُ ٱدۡعُونِيٓ أَسۡتَجِبۡ لَكُمۡۚ إِنَّ ٱلَّذِينَ يَسۡتَكۡبِرُونَ عَنۡ عِبَادَتِي سَيَدۡخُلُونَ جَهَنَّمَ دَاخِرِينَ ٦٠﴾

(ແລະ ພຣະເຈົ້າຂອງພວກເຈົ້າຕຣັດວ່າ ຈົ່ງວິງວອນຂໍຕໍ່ຂ້າ ຂ້າກໍ່ຈະຕອບຮັບແກ່ພວກເຈົ້າ ສ່ວນບັນດາຜູ້ໂອຫ້ງຕໍ່ການແ ຄ້ວ່ນພັກດີແກ່ຂ້ານັ້ນ ຈະເຂົ້າໄປຢູ່ໃນນະລົກຢ່າງຕ່ຳຕ້ອຍ) [ສູເຣາະຫ໌ ອັລ-ກຳຟິຣ: 60]. ແລະ ອັລລໍຮ໌ຜູ້ຊົງມະຫາບໍລິສຸດໄດ້ ຕຣັດວ່າ:

﴿إِنَّ ٱلَّذِينَ تَدۡعُونَ مِن دُونِ ٱللَّهِ عِبَادٌ أَمۡثَالُكُمۡۖ فَٱدۡعُوهُمۡ فَلۡيَسۡتَجِيبُواْ لَكُمۡ إِن كُنتُمۡ صَٰدِقِينَ ١٩٤﴾

(ແທ້ຈິງ ບັນດາຜູ້ທີ່ພວກເຈົ້າວິງວອນຂໍ ອື່ນຈາກອັລລໍຮ໌ນັ້ ນ ຄືບັນດາບ່າວເຊັ່ນດຽວກັບພວກເຈົ້າ, ດັ່ງນັ້ນ ພວກເຈົ້າຈົ່ງ ວິງວອນຂໍຕໍ່ພວກເຂົາເຖີດ ແລ້ວໃຫ້ພວກເຂົາຕອບຮັບແກ່ພ ວກເຈົ້າ ຫາກພວກເຈົ້າເປັນຜູ້ສັດຈິງ) [ອ໊ຣາະຫ໌ ອັລ-ອະຣ໊ຟ : 194], ແລະ ອັລລໍຮ໌ຜູ້ຊົງກຽງໄກສົ່ງ ໄດ້ຕຣັດວ່າ:

﴿وَأَنَّ ٱلۡمَسَٰجِدَ لِلَّهِ فَلَا تَدۡعُواْ مَعَ ٱللَّهِ أَحَدٗا ١٨﴾

(ແລະ ວ່າແທ້ຈິງບັນດາມັສຍິດນັ້ນເປັນຂອງອັລລໍຮ໌ ດັ່ງນັ້ ນ ພວກເຈົ້າຢ່າໄດ້ວິງວອນຂໍຜູ້ໃດຄຽງຄູ່ກັບອັລລໍຮ໌).

[ອ໊ຣາະຫ໌ ອັລ-ຈິນ : 18].

ບໍ່ໃຫ້ຂໍດຸອາຕໍ່ອັລລໍຮ໌ທີ່ກຸໂບຣ, ຫາກວ່າຕ້ອງການຂໍດຸອາ ກໍ່ ໃຫ້ກ້າວອອກມາຈາກຫວ່ມຝັງສົບກ່ອນ, ແລະ ຫັນໜ້າໄປທາ

ງກັບລັດ ແລ້ວຈຶ່ງຂໍດຸອາ, ແລະ ບໍ່ໃຫ້ຫັນໜ້າໄປທາງຫລຸ່ມໃນຂະນະທີ່ຂໍດຸອາ.

ແລະ ທ່ານອີຫມ່ານລົງ ຂໍອັລລໍຫ໌ຊົງເມດຕາຕໍ່ທ່ານ ໄດ້ກ່າວວ່າ: "ຂ້າພະເຈົ້າບໍ່ເຫັນວ່າມັນສົມຄວນທີ່ຈະຢືນທີ່ກຸໂບຮຂອງທ່ານນະບີ ﷺ ເພື່ອຂໍດຸອາ."

ບໍ່ເປັນທີ່ບັນຍັດໃຫ້ມີການແວະວຽນໄປທີ່ກຸໂບຮເລື້ອຍໆ ໃນເວລາເຂົ້າ ຫຼື ອອກຈາກມັສຍິດ, ບໍ່ວ່າຈະເປັນສຳລັບຊາວເມືອງມະດີນະຫ໌ ຫຼື ຜູ້ທີ່ມາຢ້ຽມຢາມຈາກພາຍນອກກໍຕາມ; ເພາະແທ້ຈິງແລ້ວເປັນທີ່ຢ້ານກົວວ່າ ສິ່ງດັ່ງກ່າວຈະເປັນການຍຶດຖືເອົາກຸໂບຮເປັນງານບຸນ(ອີດ).

ແລະ ທ່ານຣໍຊູລ ຂອງອັລລໍຫ໌ ﷺ ໄດ້ຫ້າມຈາກສິ່ງດັ່ງກ່າວ, ດັ່ງທີ່ກ່າວວ່າ:

«لَا تَتَّخِذُوا قَبْرِي عِيدًا، وَلَا تَجْعَلُوا بُيُوتَكُمْ قُبُورًا، وَحَيْثُمَا كُنْتُمْ فَصَلُّوا عَلَيَّ، فَإِنَّ صَلَاتَكُمْ تَبْلُغُنِي».

«ພວກເຈົ້າຢ່າໄດ້ຍຶດຖືເອົາກຸໂບຮຂອງຂ້ອຍເປັນງານບຸນ, ແລະ ຢ່າໄດ້ເຮັດໃຫ້ບ້ານເຮືອນຂອງພວກເຈົ້າເປັນບັນດາກຸໂບຮ, ແລະ ບໍ່ວ່າພວກເຈົ້າຈະຢູ່ໃສກໍຕາມ ຈົ່ງຊ່ວະຫອາດໃຫ້ແກ່ຂ້ອຍ, ເພາະແທ້ຈິງ ການຊ່ວະຫອາດຂອງພວກເຈົ້າຈະໄປເຖິງຂ້ອຍ»[1].

ແລະ ຄວາມໝາຍຂອງ: “ພວກເຈົ້າຢ່າໄດ້ຍຶດຖືເອົາກຸໂບຮຂອງຂ້ອຍເປັນອັນອີດ” ຄືການກັບຄືນໄປຫາມັນໃນເວລາ ຫຼື ສະພາບການທີ່ສະເພາະເຈາະຈົງ, ເຊັ່ນການເຈາະຈົງໄປຍຽມຍາມ

[1] ບັນທຶກໂດຍ ທ່ານອະຫ໌ມັດ ໃນໜັງສືມຸສນັດ ເລກທີ (8804), ດ້ວຍສາຍລາຍງານຮາຊັນ.

ມັນໃນທຸກໆ ມື້, ຫຼື ທຸກໆ ອາທິດ, ຫຼື ທຸກໆ ເດືອນ. ຫຼື ໃນສະພາ
ບການທີ່ສະເພາະເຈາະຈົງໃດໜຶ່ງ ເຊິ່ງຈະມີການໂປຍງມຍາມເ
ມື່ອສິ່ງນັ້ນປາກົດຂຶ້ນ, ແລະ ມີການກ່າວວ່າ: ໝາຍຄວາມວ່າ
ພວກເຈົ້າຢ່າໄດ້ຍົດຖືເອົາມັນເປັນເຫດສະການທີ່ພວກເຈົ້າມາ
ຊຸມນຸມກັນ[1].

ແລະ ທ່ານອິຫມ່າມາລິກ ຂໍອັລລໍຫ໌ຊົງເມດຕາທ່ານ ໄດ້ກ່າວ
ວ່າ: "ແລະ ບໍ່ເປັນສິ່ງຈຳເປັນສຳລັບຜູ້ທີ່ເຂົ້າໄປໃນມັສຍິດ ແລະ
ອອກຈາກທີ່ນັ້ນ ທີ່ເປັນຊາວມະດີນະຫ໌ ທີ່ຈະຕ້ອງຢືນຢູ່ທີ່ຫລຸມ
ຝັງສົບ, ແຕ່ສິ່ງດັ່ງກ່າວແມ່ນສຳລັບຄົນຕ່າງຖິ່ນ"[2].

ແລະ ຄຳກ່າວຂອງເພິ່ນ ຂໍອັລລໍຫ໌ຊົງເມດຕາເພິ່ນ ທີ່ວ່າ: "
ແລະສິ່ງນັ້ນແມ່ນສຳລັບຄົນຕ່າງຖິ່ນເທົ່ານັ້ນ": ໝາຍເຖິງ ກາ
ນຢ້ຽມຢາມໂດຍທົ່ວໄປ, ບໍ່ແມ່ນການຢ້ຽມຢາມຊ້ຳໄປຊ້ຳມາ ເອ
ລາເຂົ້າ-ອອກ.

ບໍ່ໃຫ້ຢືນຢູ່ຕໍ່ໜ້າກຸໂບຣໃນທ່າທາງຄືກັບຜູ້ລະຫມາດ ດ້ວຍ
ການວາງມືຂ້າງໜຶ່ງທັບມືອີກຂ້າງໜຶ່ງຢູ່ເທິງກາງເອິກ ຫຼື ລຸ່ມເ
ອິກ; ເພາະແທ້ຈິງທ່າທາງນີ້ແມ່ນສະເພາະສຳລັບການລະຫມາ
ດ, ແລະ ມັນເປັນທ່າທາງແຫ່ງການນອບນ້ອມ ແລະ ການຍອ
ມຈຳນົນ ເຊິ່ງບໍ່ເໝາະສົມແກ່ຜູ້ໃດນອກຈາກ ອັລລໍຮ໌ ລຸບຮານ
ະ ຮູ ອະຕະອາລາ.

ຈະຕ້ອງບໍ່ຫັນໜ້າໄປຫາກຸໂບຣຈາກສະຖານທີ່ຫ່າງໄກ ເພື່ອ
ໃຫ້ສະດວກແກ່ທ່ານນະບີ ﷺ ດັ່ງທີ່ບາງຄົນໄດ້ປະຕິບັດກັນ; ເພ

---

[1] ເບິ່ງໃນ ອັລ-ມຸເຜຣ໌ດາຕ ວິຣ-ຣ໌ກີບ ອັລ-ອັສຜະຮານີ (ໜ້າ 594), ລາເຣາະຫ໌ ອັສ-ລຸດູຣ
ບິຕະຫ໌ຣິມ ຣ໌ເຟ ອັລ-ກຸບູຣ ວິຣ-ເຊິຫ໌ການີ (ໜ້າ 16).

[2] ໜັງສື ອັຣ-ຣິເຟ ວິລ-ກ໌ດີ ອີຍາດ (2/ 204) ແລະ ອັລ-ມັດຄ໌ລ ວິ-ອິບນ໌ ອັລ-ຮາຈ໌ (1/ 262).

າະວ່າສິ່ງດັ່ງກ່າວບໍ່ເຄີຍຖືກປະຕິບັດໂດຍບັນດາສໍຫາບະຫ໌ ຂໍດີຍັວລ໌ ອັນຮຸມ ແລະ ບັນດາຊະລັຟຜູ້ຊອບທຳ ຈາກບັນດາອິມ່າມທັງສີ່ ແລະ ນອກເໜືອຈາກພວກເຂົາ.

ການບໍ່ຫັນໜ້າໄປທາງກຸໂບຣອັນຊົ່ງກ່ຽດ ເພື່ອວິງວອນຂໍດຸອາ ຫຼື ອ່ານພຣະຄຳພີອັລກຸຣອານ ແລະ ສິ່ງອື່ນໆ ທີ່ຄ້າຍຄືກັນ ບໍ່ວ່າຈະຈາກທິດທາງໃດກໍຕາມ, ເພາະແທ້ຈິງສິ່ງນີ້ແມ່ນຈັດຢູ່ໃນປະເພດດຽວກັນກັບສິ່ງກ່ອນໜ້ານີ້ ຈາກບັນດາສິ່ງທີ່ຖືກອຸປະໂຫຼກຂຶ້ນໃໝ່, ແລະ ບໍ່ເປັນທີ່ອະນຸຍາດສຳລັບຊາວມຸສລິມ ທີ່ຈະອຸປະໂຫຼກສິ່ງໃໝ່ໃນສາດສະນາຂອງຕົນ ໃນສິ່ງທີ່ອັລລ໌ອ໌ບໍ່ໄດ້ຊົ່ງອະນຸຍາດ, ແລະ ແທ້ຈິງ ທ່ານອິມ່ານ ນາລີກ ຣໍຫິມະຮຸລລ໌ ໄດ້ຄັດຄ້ານການກະທຳທີ່ຄ້າຍຄືກັນນີ້, ແລະ ໄດ້ກ່າວວ່າ: "ຊົ່ນລຸ້ນຫຼັງຂອງອຸມມະຫ໌ນີ້ຈະບໍ່ດີຂຶ້ນ ເວັ້ນເສຍແຕ່ດ້ວຍສິ່ງທີ່ໄດ້ເຮັດໃຫ້ຊົ່ນລຸ້ນທຳອິດຂອງມັນດີຂຶ້ນ"[1].

ການບໍ່ຫຍຸ້ງຢູ່ກັບການຖ່າຍຮູບ ແລະ ການຖ່າຍທອດສົດ ໃນຂະນະກ່າວສະລາມຕໍ່ທ່ານນະບີມຸຮຳຫມັດ ﷺ.

ຂໍອັລລ໌ອ໌ ຊົ່ງປະທານການສະດຸດີພອນ ແລະ ຄວາມຈຳເລີນ ແລະ ຄວາມສັນຕິສຸກ ແດ່ທ່ານນະບີມຸຮຳມັດຂອງເຮົາ, ແດ່ຄອບຄົວຂອງທ່ານ ແລະ ບັນດາມິດສະຫາຍຂອງທ່ານ.

***

[1] ໜັງສືຟັດຕະວາ ອິບນຸ ບາສ (16/ 110).

# ສາລະບັນ

ຄວາມປະເສີດ ແລະ ມາລະຍາດທີ່ຄວນມີຕໍ່ມັສຍິດອັນ-ນະບະວີ, ແລະ ຂໍ້ບັນຍັດຂອງການຢ້ຽມຢາມຫລຸມຝັງສົບຂອງທ່ານນະບີ ຈຸ່ລລັລລ໋ຮຸ ອະໄລຮິ ອະສັລລ໋ຳ ແລະ ຫລຸມຝັງສົບຂອງສະຫາຍທັ້ງສອງຂອງທ່ານ ຣ໋ດິຍັລລ໋ຮຸ ອັນຮຸມາ ..... 2

ບົດນຳ ..... 2

ໝວດ ໜຶ່ງ: ຄວາມປະເສີດຂອງມັສຍິດອັນນະບະວີ (ມັສຍິດຂອງທ່ານນະບີ) ..... 3

ສອງ: ການສົ່ງເສີມໃນການໄປຢ້ຽມຢາມ ມັສຍິດນະບະວີ ອັນຊົ່ງກຽດ 6

ສາມ: ມາລະຍາດໃນການຢ້ຽມຢາມມັສຍິດນະບະວີ ..... 7

ສີ່: ຂໍ້ບັນຍັດ ແລະ ມາລະຍາດອ່າດ້ວຍການຢ້ຽມຢາມກູໂບຣຂອງທ່ານນະບີ ຈຸ່ລລັລລ໋ຮຸ ອະໄລຮິ ອະຊັລລ໋ຳ ແລະ ກູໂບຣສະຫາຍທັ້ງສອງຂອງທ່ານ ຣ໋ດິຍັລລ໋ຮຸ ອັນຮຸມາ ..... 17

❋❋❋

lo492v1.0 - 02/11/2026

رئاسة الشؤون الدينية بالمسجد الحرام والمسجد النبوي

# رسالة الحرمين

## ສານຈາກສອງສະຖານທີ່ ແຫ່ງຄວາມສັກສິດ

ເນື້ອຫາຄຳແນະນຳທາງສາສະໜາ
ສຳຫຼັບຜູ້ທີ່ເດີນທາງສູ່ມັສຍິດອັລຫະຣອມ
ແລະ ມັສຍິດອັນນະບະວີ ໃນພາສາຕ່າງໆ